ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ສາມອົງການຈັດຕັ້ງມະຫາຊົນ ທຫລ ໄດ້ຮ່ວມກັບກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ບໍລິຈາກເລືອດເພື່ອຊ່ວຍເຫຼືອສັງຄົມໃນການສ້າງຂະບວນການຂໍ່ານັບຮັບຕ້ອນ ວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 55 ປີ



(ທ່ານ ບຸນທະວີ ສຸກດາວົງ ຜູ້ທີ 5 ນັບຈາກຂວາມື)

ໃນວັນທີ 18 ສິງຫາ 2023 ທີ່ຫໍວັດທະນະທຳ ແຫ່ງຊາດ ສາມອົງການຈັດຕັ້ງມະຫາຊົນທະນາຄານແຫ່ງ ສປປ ລາວ (ອົງການຈັດຕັ້ງກຳມະບານ, ອົງການຈັດຕັ້ງຊາວໜຸ່ມ ແລະ ອົງການຈັດຕັ້ງແມ່ຍິງ) ໂດຍຮ່ວມກັບກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ນຳໂດຍ ສະຫາຍ ບຸນທະວີ ສຸກດາ

ວິງ ເລຂາຄະນະບໍລິຫານງານຊາວໜຸ່ມທະນາຄານແຫ່ງ ສປປ ລາວ ຕາງໜ້າສາມອົງການຈັດຕັ້ງມະຫາຊົນ ໄດ້ລະດົມສະມາຊິກສາມອົງການຈັດຕັ້ງມະຫາຊົນບັນດາກົມກອງ ແລະ ທຽບເທົ່າພາຍໃນ ທຫລ, ທະນາຄານທຸລະກິດລັດ-ລັດຮຸ້ນສ່ວນ, ທະນາຄານທຸລະກິດເອກະຊົນ, ທະນາຄານທຸລະກິດສາຂາຕ່າງປະເທດທີ່ດໍາເນີນທຸລະກິດໃນນະຄອນຫຼວງວຽງຈັນເຂົ້າຮ່ວມບໍລິຈາກເລືອດເປັນຈໍານວນຫຼາຍກວ່າ 120 ຄົນ.



ຈຸດປະສົງການລະດົມມະຫາຊົນຮ່ວມບໍລິຈາກເລືອດໃນຄັ້ງນີ້ ກໍ່ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນສ້າງທະນາຄານແຫ່ງ ສປປ ລາວ ຄົບຮອບ 55 ປີ (ວັນທີ 07 ຕຸລາ 1968 - ວັນທີ 07 ຕຸລາ 2023) ໂດຍສະເພາະການເຄື່ອນໄຫວຂະບວນການຊ່ວຍເຫຼືອສັງຄົມ, ຊຶ່ງໃນປະຈຸບັນອົງການກາແດງແຫ່ງຊາດລາວ ສະຖາບັນເລືອດແຫ່ງຊາດ ແມ່ນມີຄວາມຕ້ອງການນໍາໃຊ້ເລືອດເປັນຈໍານວນຫຼາຍເຂົ້າໃນການປິ່ນປົວຄົນເຈັບຢູ່ຕາມໂຮງໝໍຕ່າງໆເຫັນວ່າມີຄວາມຕ້ອງການສູງພໍສົມຄວນໃນແຕ່ລະວັນ ເພື່ອນໍາໃຊ້ເຂົ້າໃນການປິ່ນປົວຄົນເຈັບ ໂດຍສະເພາະແມ່ນຄົນເຈັບໄຂ້ຍຸງລາຍ, ການເສຍເລືອດຍ້ອນການເກີດລູກ, ອຸປະຕິເຫດ, ການຜ່າຕັດ ແລະ ອື່ນໆ.







ສະນັ້ນ, ສາມອົງການຈັດຕັ້ງມະຫາຊົນ ທະນາຄານແຫ່ງ ສປປ ລາວ ຈຶ່ງຮຽກຮ້ອງມາຍັງທຸກພາກສ່ວນ ໂດຍສະເພາະກໍ່ແມ່ນສະມາຊິກສາມອົງການຈັດຕັ້ງມະຫາຊົນໃນຂະແໜງການທະນາຄານຂອງພວກເຮົາ ຜູ້ທີ່ມີເງື່ອນໄຂໃນການບໍລິຈາກເລືອດ ຈົ່ງໄດ້ພ້ອມພຽງກັນ, ຊ່ວຍເຫຼືອກັນ ແລະ ລະດົມສະມາຊິກຂອງຕົນເຂົ້າຮ່ວມບໍລິຈາກເລືອດໃຫ້ຫຼາຍທີ່ສຸດ ເພາະການໃຫ້ເລືອດໜຶ່ງຄັ້ງກໍ່ປຽບເໝືອນການໃຫ້ຊີວິດອີກໜຶ່ງຄົນ.

ພາບ: ແຂກ ມູນລະໄມ

ຂ່າວ: ແຝງສຸລີ ທຳມະວົງ